ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ

ເລກທີ: 1633/ຜ-ຟຟລ

ນະຄອນຫຼວງວຽງຈັນ, ວັນທີ 30 APR 2026

ໜັງສືແຈ້ງເຊີນປະມູນ

ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ (ຜ-ຟຟລ), ຂໍເຊີນບັນດາບໍລິສັດ ທີ່ສົນໃຈ ແລະ ມີເງື່ອນໄຂ ເໝາະສົມ ເຂົ້າຮ່ວມປະມູນເປີດກວ້າງພາຍໃນ ສຳລັບ ວຽກຈັດຊື້ໜ່ວຍ Circuit breaker HPA 630A 24 kV ອຸປະກອນປ່ຽນຖ່າຍ ໃນການສ້ອມແປງພາກໄຟຟ້າ ປະຈຳປີ 2026 ຂອງ ເຂື່ອນໄຟຟ້ານ້ຳເລິກ.

ການປະມູນ ຈະດຳເນີນຕາມຂັ້ນຕອນການປະມູນເປີດກວ້າງພາຍໃນ ພາຍໃຕ້ ລະບຽບ ຈັດຊື້-ຈັດຈ້າງຂອງ ຜ-ຟຟລ ສະບັບປັບປຸງປີ 2024 ຂອງ ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ (ຜ-ຟຟລ), ສະບັບລົງວັນທີ 22/04/2024

ບໍລິສັດ ທີ່ມີເງື່ອນໄຂເໝາະສົມ ສົນໃຈ ສາມາດຕິດຕໍ່ພົວພັນ ແລະ ກວດກາເບິ່ງເອກະສານປະມູນໄດ້ທີ່ສຳນັກງານໃຫຍ່ ຜ-ຟຟລ, ຝ່າຍກົດໝາຍ-ສັນຍາ, ພະແນກຈັດຊື້, ໃນວັນລັດຖະການ, ນັບຈາກວັນທີ 04/05/2026- 20/05/2026 ຄື: ຕອນເຊົ້າ ເວລາ 08:30 - 12:00 ໂມງ ແລະ ຕອນບ່າຍ ເວລາ 13:00 - 17:00ໂມງ ສຳນັກງານຕັ້ງຢູ່: ຖະໜົນມິດຕະພາບ ລາວ-ໄທ, ບ້ານທົ່ງກາງ, ເມືອງສີສັດຕະນາກ, ນະຄອນຫຼວງວຽງຈັນ, ສປປ.ລາວ, ຕູ້ ປ.ນ 2392, ໂທລະສັບ: (856-21) 316 142, ໂທລະສານ: (856-21) 316 141.

ບໍລິສັດ ທີ່ສົນໃຈ ແລະ ຕ້ອງການຊື້ເອກະສານປະມູນ, ຕ້ອງຍື່ນໜັງສືສະເໜີຊື້ຊອງປະມູນ ເຖິງ ຜ-ຟຟລ, ເລີ່ມແຕ່ ວັນທີ 04/05/2026- 20/05/2026, ໃນລາຄາ 500,000 (ຫ້າແສນກີບຖ້ວນ) ກີບ/ຊຸດ.ວິທີການຊຳລະຕ້ອງຊຳລະເປັນເງິນສົດເທົ່ານັ້ນ, ໂດຍຈຳນວນເງິນດັ່ງກ່າວ ຜ-ຟຟລ ຈະບໍ່ມີການສົ່ງຄືນ.

ການລົງສຳຫຼວດສະຖານທີ່ຕົວຈິງ ແລະ ເກັບຂໍ້ມູນຈະຈັດຂຶ້ນໃນວັນທີ 22/05/2026 ເວລາ 11:00 ໂມງ ທີ່ ເຂື່ອນໄຟຟ້ານ້ຳເລິກ, ຕັ້ງຢູ່ບ້ານ ພູປ່າມັນ, ເມືອງ ລອງຊານ, ແຂວງ ໄຊສົມບູນ, (ຖ້າເປັນພາກັ່ງຄັບ).

- ສຳລັບຄ່າໃຊ້ຈ່າຍຕ່າງໆທີ່ເກີດຂຶ້ນ ແລະ ການເດີນທາງທັງໝົດແມ່ນຄວາມຮັບຜິດຊອບ ຂອງ ຜູ້ເຂົ້າຮ່ວມປະມູນ.

ຊອງປະມູນຕ້ອງສົ່ງໃຫ້ ຜ-ຟຟລ ຕາມທີ່ຢູ່ຂ້າງເທິງ, ກ່ອນເວລາ 14:00 ໂມງ ຂອງ ວັນທີ 02/06/2026, ກໍລະນີທີ່ ທ່ານ ຫາກສົ່ງຊ້າກວ່າເວລາທີ່ກຳນົດໄວ້, ຜ-ຟຟລ ຈະບໍ່ຮັບເອົາ ແລະ ຈະສົ່ງຄືນ ໂດຍບໍ່ມີການເປີດຊອງ, ສຳລັບເວລາເປີດຊອງປະມູນຈະໄດ້ເລີ່ມເປີດໃນເວລາ 14:00 ໂມງເປັນຕົ້ນໄປ ຂອງ ວັນດຽວກັນ.ໂດຍເປີດຊ້ອງໜ້າ ຄະນະການຈັດຊື້ ຜ-ຟຟລ ແລະ ຕົວແທນ ຂອງ ຜູ້ເຂົ້າຮ່ວມປະມູນທີ່ສົນໃຈເຂົ້າຮ່ວມນຳ.

ດ້ວຍຄວາມນັບຖື,

ຜູ້ອຳນວຍການໃຫຍ່

ບໍລິສັດ ຜະລິດ-ໄຟຟ้າລາວ ມະຫາຊົນ EDL-Generation Public Company

ສຸກສະໜາດ ໄສສຸພັນ

ຜູ້ອຳນວຍການໃຫຍ່